ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: - 0 6 0 2 / 2 6 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 13 ສິງຫາ 2026

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2026, ທີ່ຈັດຂຶ້ນໃນວັນທີ 13 ສິງຫາ 2026

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2026, ທີ່ຈັດຂຶ້ນໃນວັນທີ 13 ສິງຫາ 2026 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ແລະ ບົດລາຍງານທາງການເງິນ 6 ເດືອນ ຕົ້ນປີ 2026 ສິ້ນສຸດໃນວັນທີ 30 ມິຖຸນາ 2026.
2. ອະນຸມັດເພີ່ມຜະລິດຕະພັນໃໝ່ (Leasing) ຂອງບໍລິສັດ.
3. ອະນຸມັດປັບປຸງເງື່ອນໄຂໃນການປ່ອຍສິນເຊື່ອ (Credit Criteria) ສຳລັບຜະລິດຕະພັນຂອງບໍລິສັດ.
4. ຮັບຮູ້ຜົນການດຳເນີນງານຂອງບໍລິສັດ ສິ້ນສຸດເດືອນກໍລະກົດ 2026.
5. ຮັບຮູ້ກະແສເງິນສົດໃນທ້າຍເດືອນກໍລະກົດ 2026 ແລະ ການຄາດຄະເນກະແສເງິນສົດ 3 ເດືອນຂ້າງໜ້າ.
6. ຮັບຮູ້ບົດລາຍງານການຕິດຕາມຄວາມສ່ຽງ ປະຈຳໄຕມາດທີ II ຂອງປີ 2026.
7. ຮັບຮູ້ບົດລາຍງານການກວດສອບພາຍໃນ ຄັ້ງທີ I ແລະ II ປະຈຳປີ 2026 ຈາກບໍລິສັດກວດສອບພາຍນອກ.
8. ຮັບຮູ້ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ AI

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ມາໂນ ຕຣິລິດວິໄລ)